*Souphanouvong University Journal of Multidisciplinary Research and Development*
*2024, Vol. 10, Special Issue, 111-120*
*https://doi.org/10.69692/SUJMRD10special111*

# Community Participation in Developing Educational Quality for Primary School in PakOu District Luang Prabang

**Hong-Am Nart Bounkeomany[1], Thongthiane Vathanavong[2], Saiphone Khotsaigno[3], And Paphaichit Bounkeomany[4]**

*Educational office of Pak Ou District, Luang Prabang Province Lao PDR*

***Correspondence**: Hong-Am Nart Bounkeomany, Educational office of Pak Ou District, Luang Prabang Province , Lao PDR Tel: 020 98247982, E-mail: hoghog198355@gmail.com*

***Submitted: December 05, 2024***

***Revised: December 15, 2024***

***Accepted: December 31, 2024***

**Abstract**

The research objectives were to: 1) study the level of community participation in developing educational quality for primary schools in Pakou District, Luang Prabang Province, and 2) compare the differences in the level of community participation in developing educational quality for primary schools in Pakou District, Luang Prabang Province. by using a total of 106 questionnaires and the SPSS program to analyze frequency, percentage (%), mean ( $\overline{X}$ ), standard deviation (S.D.), and variance analysis (One-Way ANOVA).

The results were as follows:

1) The overall level of community participation in developing the quality of primary education in PakOu District, Luang Prabang Province, was high ( $\overline{X}$ =3.65, S.D. =1.04). When considering the aspects, it was found that the aspect of participating in student promotion is at a high level ( $\overline{X}$ = 3.75, S.D. = 1.01), and the aspect of participating in knowing students personally is at a high level ( $\overline{X}$ = 3.73, S.D. = 1.02). and the aspect of participating in filtering students is at a moderate level ( $\overline{X}$ = 3.49, S.D. = 1.16).

2) The comparison of the differences between individual factors on community participation in the development of the quality of primary education found that gender and age factors have different effects on participating with a statistical significance level of 0.05; educational level and experience factors have different effects on participation in student promotion and no difference in participating in knowing students personally and participation in filtering students. Different position factors have no difference in participation.

**Keywords**: *Education Quality, Community Participation, Primary School, Development*

## 1. ພາກສະເໜີ

ໃນປັດຈຸບັນ ພັກປະຊາຊົນປະຕິວັດລາວ ກໍ່ຄື ລັດຖະບານແຫ່ງສາທາລະນະລັດ ປະຊາຊົນປະໄຕ ປະຊາຊົນລາວ ໄດ້ໃຫ້ຄວາມສຳຄັນຕໍ່ວຽກງານການສຶກສາ ແລະ ຖືເອົາວຽກງານການສຶກສາໄປກ່ອນວຽກງານອື່ນໜຶ່ງບາດກ້າວ. ໂດຍກະຊວງສຶກສາທິການ ແລະ ກິລາ (2020) ໃນຖານະເປັນຜູ້ຈັດຕັ້ງປະຕິບັດວຽກງານການສຶກສາໂດຍກົງ ຈຶ່ງໄດ້ກຳນົດບູລິມະສິດຈຳນວນໜຶ່ງ ເຂົ້າໃນແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025) ຊຶ່ງລວມມີແຜນພັດທະນາການສຶກສາ 10 ຂະແໜງການຍ່ອຍ ເວົ້າລວມ, ເວົ້າສະເພາະແມ່ນຂະແໜງການຍ່ອຍ ການສຶກສາຊັ້ນປະຖົມ ເພື່ອສຸມໃສ່ປັບປຸງຄຸນນະພາບການສຶກສາ ໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບຄວາມເປັນຈິງ; ກຳນົດທັກສະ ແລະ ຄວາມສາມາດ ຂອງພະນັກງານພາຍໃນຂະແໜງການສຶກສາທິການ ແລະ ກິລາ; ສ້າງຄວາມເຂັ້ມແຂງໃຫ້ແກ່ພະແນກສຶກສາແຂວງ, ຫ້ອງການສຶກສາເມືອງ, ກຸ່ມໂຮງຮຽນ ແລະ ໂຮງຮຽນ. ເປັນຕົ້ນການຈັດຕັ້ງປະຕິບັດຜົນໄດ້ຮັບລະດັບສູງຂອງຂະແໜງການຍ່ອຍການສຶກສາຊັ້ນປະຖົມ ເຊັ່ນ: (1) ຈຳນວນນັກຮຽນ ທີ່ຈົບຈາກຊັ້ນປະຖົມສຶກສາ ເພີ່ມຂຶ້ນ ພ້ອມທັງມີຜົນໄດ້ຮັບດ້ານການຮຽນຮູ້ດີຂຶ້ນ, ທັກສະການຮຽນຮູ້ໜັງສື ແລະ ທັກສະການຄິດໄລ່ ເລກ, ທັກສະສັດຕະວັດທີ 21 ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍ  ໂອກາດ ແລະ ຄວາມສະເໝີພາບລະຫວ່າງ ຍິງ-ຊາຍ; (2) ຈຳນວນຄູ ແລະ ຜູ້ອຳນວຍການໂຮງຮຽນທີ່ມີຄວາມຮູ້ ຄວາມສາມາດເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບມາດຕະຖານ ການສິດສອນ ໂດຍໃຫ້ມີການປະເມີນ ການປະຕິບັດ ໜ້າທີ່ ຂອງເຂົາເຈົ້າ ເປັນປົກ ກະຕິ; (3) ໂຮງຮຽນທຸກແຫ່ງ ມີຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດພຽງພໍ່ ເພື່ອໃຫ້ສາມາດ

ເຮັດວຽກໄດ້ ຢ່າງມີປະສິດທິຜົນ, ພ້ອມທັງຂີດຄວາມສາມາດ ໃນການຄຸ້ມຄອງໂຮງຮຽນ ໄດ້ຮັບການປັບປຸງດີຂຶ້ນ (ລັດຖະບານແຫ່ງ ສປປ ລາວ, 2016); ກະຊວງສຶກສາທິການ ແລະ ກິລາ, 2020).

ຕະຫຼອດໄລຍະທີ່ຜ່ານມາ ເຖິງວ່າກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາ ແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຄູ່ຮ່ວມພັດທະນາ ໄດ້ສຸມທັງການຊ່ວຍເຫຼືອທາງດ້ານວິຊາການ ແລະ ດ້ານງົບປະມານ ເຂົ້າໃສ່ການພັດທະນາການສຶກສາຊັ້ນປະຖົມ ເພື່ອໃຫ້ມີຄຸນນະພາບ ແຕ່ໃນການຈັດຕັ້ງປະຕິບັດຕົວຈິງຂອງຫ້ອງການສຶກສາທິການ ແລະ ກິລາເມືອງປາກອູ (2023) ຍັງພົບບັນຫາ ແລະ ສິ່ງທ້າທາຍທີ່ເກີດຂຶ້ນໃນໄລຍະການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນ ຜົນການປະເມີນການປະຕິບັດໜ້າທີ່ຂອງຄູສອນ, ການປະເມີນຄູສອນທ້າຍປີ ຍັງບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງເທົ່າທີ່ຄວນ ໂດຍສ່ວນໃຫຍ່ຄູປະເມີນຜ່ານເກນໃນລະດັບດີ ແຕ່ຜົນການຮຽນຮູ້ຂອງນັກຮຽນບໍ່ມີຄຸນນະພາບເທົ່າທີ່ຄວນ; ຜູ້ບໍລິຫານສະຖານການສຶກສາ ຍັງຂາດການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາຢ່າງເປັນລະບົບ, ຂາດການເຮັດການປະເມີນຕາມມາດຕະຖານຄຸນນະພາບການສຶກສາຂັ້ນພື້ນຖານ; ຄູສອນຈຳນວນຫຼາຍຂາດການຫັນປ່ຽນທາງດ້ານແນວຄິດ, ຈິນຕະນາການ, ຈັນຍາບັນ ຖືເບົາຕໍ່ຄວາມຮັບຜິດຊອບໜ້າທີ່ທາງດ້ານວິຊາການ, ຂາດການຕິດຕາມປະເມີນຜົນການຮຽນຂອງນັກຮຽນ, ບໍ່ກຳໄດ້ສະພາບຈຸດພິເສດຂອງນັກຮຽນ ແລະ ຂາດການວັດປະເມີນຜົນແບບຕໍ່ເນື່ອງ; ຫຼາຍໂຮງຮຽນ ກະແສນັກຮຽນມີໜ້ອຍ, ຈຳນວນຄູສອນບໍ່ພຽງພໍ ແລະ ມີແນວໂນ້ມຫຼຸດລົງເລື້ອຍໆ, ຕ້ອງໄດ້ຈັດການຮຽນ-ການສອນຫ້ອງຄວບເຮັດໃຫ້ການຮຽນການສອນບໍ່ຮັບປະກັນຄຸນນະພາບ; ຂີດຄວາມສາມາດຂອງຜູ້ບໍລິຫານການສຶກສາບໍ່ທັນສູງ, ເຮັດໃຫ້ການບໍ່ລິຫານຂາດຄຸນນະພາບ; ການລົງຕິດຕາມ, ຊຸກຍູ້ຂອງຄູສຶກສານິເທດ ແລະ ຜູ້ບໍລິຫານຂັ້ນເມືອງ, ຂັ້ນກຸ່ມ ຍັງບໍ່ທັນທົ່ວເຖິງ, ບໍ່ເປັນລະບົບ ເນື່ອງຈາກງົບປະມານມີຈຳກັດ; ການສະໜອງເງິນບໍລິຫານໂຮງຮຽນ ສຳລັບຊັ້ນປະຖົມຍັງຊັກຊ້າ ບໍ່ທັນກັບສະພາບການຈັດຕັ້ງປະຕິບັດ; ການປະສານງານລະຫວ່າງໂຮງຮຽນ ກັບ ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ຈາກສິ່ງທ້າທາຍທີ່ກ່າວມາໄດ້ເຮັດໃຫ້ປະສິດທິພາບພາຍໃນ ຂອງການສຶກສາຊັ້ນປະຖົມ ແມ່ນຍັງບໍ່ທັນປະສົບຜົນສຳເລັດໄດ້ດີເທົ່າທີ່ຄວນ ເຖິງແມ່ນວ່າ ປະສິດທິພາບພາຍໃນບາງຕົວຊີ້ວັດຈະມີແນວໂນ້ມດີຂຶ້ນເຊັ່ນ: ອັດຕາລອດເຫຼືອຮອດຊັ້ນ ປ.5 ເພີ່ມຂຶ້ນ ຈາກ 80.19% ມາເປັນ 97.30%, ອັດຕາປະລະຫຼຸດລົງຈາກ 2.60% ໃນສົກຮຽນ 2021-2022 ມາເປັນ 1% ໃນສົກຮຽນ 2022-2023, ແຕ່ອັດຕາຄ້າງຫ້ອງປະຖົມ ຊໍ້າພັດມີແນວໂນມເພີ່ມຂຶ້ນ ຖ້າທຽບໃນສົກຮຽນ 2021-2022 ທີ່ຜ່ານມາ ເຊັ່ນ: ອັດຕາຄ້າງຫ້ອງ ປ.1 ເພີ່ມຂຶ້ນ ຈາກ 3.91 % ເປັນ 5.60 % ອັດຕາຄ້າງຫ້ອງຊັ້ນປະຖົມ ເພີ່ມຂຶ້ນຈາກ 1.85% ມາເປັນ 3.10%. ສະແດງເຖິງຕົວຊີ້ບອກທາງດ້ານປະສິດທິພາບພາຍໃນເປັນຕົ້ນແມ່ນ ອັດຕາການປະລະ ແລະ ອັດຕາຄ້າງຫ້ອງທີ່ກ່າວມາຂ້າງເທິງນັ້ນ, ຄະນະບໍລິຫານງານຫ້ອງການສຶກສາທິການ ແລະ ກິລາເມືອງ, ກຸ່ມປະຖົມສຶກສາໄດ້ວາງທິດທາງເພີ່ມທະວີຄວາມເອົາໃຈໃສ່ແກ້ໄຂບັນຫາຄຸນນະພາບການສຶກສາຂັ້ນປະຖົມຮ່ວມກັບຄະນະພັດທະນາການສຶກສາຂັ້ນບ້ານໃຫ້ຫຼາຍຂຶ້ນໂດຍສຸມໃສ່ວຽກງານບູລິມະສິດ ຄື: ປັບປຸງຄຸນນະພາບການຮຽນ-ການສອນ ໃນຊັ້ນປະຖົມໃນຂອບເຂດທົ່ວເມືອງໃຫ້ດີຂຶ້ນ, ຫຼຸດຜ່ອນອັດຕາປະລະ ແລະ ອັດຕາຄ້າງຫ້ອງໃຫ້ນ້ອຍລົງ; ຮັບປະກັນໃຫ້ເດັກທີ່ຮຽນຈົບຊັ້ນປະຖົມມີຄວາມຮູ້, ມີຄວາມສາມາດ, ມີທັກສະໃນການອ່ານ, ການຂຽນ ແລະ ຄິດໄລ່ເລກຂັ້ນພື້ນຖານ, ສາມາດສືບຕໍ່ເຂົ້າຮຽນໃນຊັ້ນມັດທະຍົມສຶກສາຕອນຕົ້ນໄດ້ຢ່າງມີຄຸນນະພາບ; ຫັນເປັນທັນສະໄໝ, ປັບປຸງລະບົບການບໍລິຫານ ແລະ ຄຸ້ມຄອງໂດຍເນັ້ນໃສ່ໂຮງຮຽນເປັນຫຼັກໃຫ້ມີຄຸນນະພາບ. ເຊິ່ງທັງໝົດວຽກງານນີ້ມັນໄດ້ຮຽກຮ້ອງໃຫ້ທຸກພາກສ່ວນໃນສັງຄົມຕ້ອງໄດ້ມີສ່ວນຮ່ວມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເພື່ອຮ່ວມກັນພັດທະນາຄຸນນະພາບການສຶກສາຊັ້ນປະຖົມໃຫ້ມີປະສິດທິຜົນສູງຂຶ້ນ (ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກອູ, 2023) ເຊິ່ງມີງານຄົ້ນຄວ້າທີ່ກ່ຽວຂ້ອງໄດ້ພິສູດໃຫ້ເຫັນເຖິງການມີສ່ວນຮ່ວມຂອງຊຸມຊົນມີບົດບາດອັນສຳຄັນເພື່ອຊຸກຍູ້ແລະສົ່ງເສີມໃຫ້ການສຶກສາຂັ້ນປະຖົມມີປະສິດທິພາບສູງຂຶ້ນ ດັ່ງຜົນການຄົ້ນຄວ້າຂອງ Uppanisakorn & Seelah (2017) ທີ່ຊີ້ໃຫ້ເຫັນວ່າການພັດທະນາການສຶກສານັ້ນຫາກປະຊາຊົນມີສ່ວນຮ່ວມຢ່າງຈິງຈັງ ແລະ ຕໍ່ເນື່ອງ ຈະເປັນສິ່ງກະຕຸກຊຸກຍູ້ໃຫ້ເກີດການປ່ຽນແປງດ້ານຄຸນນະພາບຂອງການສຶກສາຢ່າງຕໍ່ເນື່ອງຈະກາຍເປັນນິໄສ ແລະ ເປັນທີ່ຍອມຮັບຂອງສັງຄົມຕໍ່ໄປ. ໃນຂະນະທີ່ Boonmanee (2020) ທີ່ໄດ້ສະເໜີແນະເຖິງວຽກງານການພັດທະນາການສຶກສາຄວນພິຈາລະນາໃນດ້ານນະໂຍບາຍລະດັບສະຖານສຶກສາໃຫ້ສອດຄ່ອງລະດັບສະຖານສຶກສາ ແລະ ຄວນເນັ້ນການພັດທະນາການມີສ່ວນຮ່ວມຂອງຊຸມຊົນ ແລະ ພໍ່ແມ່ຜູ້ປົກຄອງຢ່າງໃກ້ຊິດ, ການສະແຫວງຫາການມີສ່ວນຮ່ວມຈາກພາກສ່ວນຕ່າງ ໆ ຄວນມຸ່ງເນັ້ນຜົນທີ່ຈະນຳໄປສູ່ການພັດທະນາເດັກ ຫຼື ຜູ້ຮຽນໂດຍກົງ ການສ້າງຄວາມເອົາໃຈໃສ່ໃຫ້ແກ່ຊຸມຊົນ ແລະ ຜູ້ປົກຄອງເຖິງຄວາມຈຳເປັນຂອງການມີສ່ວນຮ່ວມພັດທະນາຄຸນນະພາບຂອງການສຶກສາໃນອະນາຄົດ.

ຈາກສະພາບບັນຫາທີ່ກ່າວມາຂ້າງເທິງນີ້ ແລະ ເພື່ອຜັນຂະຫຍາຍເນື້ອໃນຈິດໃຈຂອງວຽກງານບູລິມະສິດ ແລະ ທິດທາງແຜນການຂອງຄະນະບໍລິຫານງານຫ້ອງການສຶກສາທິການ ແລະ ກິລາເມືອງ. ຜູ້ຄົ້ນຄວ້າໃນຖານະເປັນໜຶ່ງໃນພະນັກງານນຳພາຊີ້ນຳວຽກງານການສຶກສາ ແລະ ສັງກັດຢູ່ຫ້ອງການສຶກສາທິການ ແລະ ກິລາເມືອງປາກອູ ເຊິ່ງມີສ່ວນກ່ຽວຂ້ອງໂດຍກົງ ຈຶ່ງໄດ້ມີຄວາມສົນໃຈດຳເນີນການສຶກສາການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາຄຸນນະພາບການສຶກສາຊັ້ນປະຖົມ ທີ່ເມືອງປາກອູ ແຂວງຫຼວງພະບາງ ເພື່ອເປັນແນວທາງທີ່ເປັນວິທະຍາສາດໃນການພັດທະນາວຽກງານຄຸນນະພາບການ

ສຶກສາຊັ້ນປະຖົມ ຢູ່ພາຍໃນເມືອງຂອງຕົນເອງໃຫ້ມີຄຸນະພາບສູງຂຶ້ນ. ເຊິ່ງໃນການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ ຄື:

1) ເພື່ອສຶກສາລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາ ຊັ້ນປະຖົມສຶກສາ ທີ່ເມືອງປາກອູ ແຂວງຫຼວງພະບາງ;

2) ເພື່ອປຽບທຽບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາທີ່ເມືອງປາກອູ ແຂວງຫຼວງພະບາງ ໂດຍຈຳແນກຕາມເພດ, ອາຍຸ, ລະດັບການສຶກສາ, ປະສົບການ ແລະ ຕຳແໜ່ງງານ.

**2. ອຸປະກອນ ແລະ ວິທີການ**

**2.1 ວິທີການຄົ້ນຄວ້າ**

ໃນການຄົ້ນຄວ້າວິໄຈຄັ້ງນີ້ ນຳໃຊ້ລະບຽບວິທີວິໄຈແບບສຳຫຼວດ, ໂດຍນຳໃຊ້ແບບສອບຖາມເປັນເຄື່ອງມືໃນການເກັບກຳຂໍ້ມູນຈາກກຸ່ມຕົວຢ່າງແລ້ວນຳຂໍ້ມູນມາວິເຄາະ ແລະ ອະທິບາຍຜົນແບບພັນລະນາຄວາມ.

**2.2 ກຸ່ມເປົ້າໝາຍ**

ກຸ່ມເປົ້າໝາຍທີ່ໃຊ້ໃນການສຶກສາຄັ້ງນີ້ ປະກອບມີ: (1) ຜູ້ບໍລິຫານສະຖານການສຶກສາຊັ້ນປະຖົມ; (2) ຄູສອນຊັ້ນປະຖົມສຶກສາ ແລະ (3) ຜູ້ນຳຊຸມຊົນຂັ້ນບ້ານ. ພາຍໃນເມືອງປາກອູ ແຂວງຫຼວງພະບາງ ເຊິ່ງມີທັງໝົດ 106 ຄົນ, ຍິງ 35 ຄົນ; ໃນນີ້ ມີຜູ້ບໍລິຫານສະຖານການສຶກສາຊັ້ນປະຖົມ ຈຳນວນ 19 ຄົນ, ຍິງ 6 ຄົນ; ຄູສອນຊັ້ນປະຖົມ ຈຳນວນ 21 ຄົນ, ຍິງ 14 ຄົນ ແລະ ຜູ້ນຳຊຸມຊົນ (ຄະນະກຳມະການພັດທະນາການສຶກສາຂັ້ນເມືອງ, ນາຍບ້ານ ແລະ ຜູ້ຊົງຄຸນວຸດທິ) ພາຍໃນເມືອງປາກອູ ຈຳນວນ 66 ຄົນ, ຍິງ 15 ຄົນ, ດ້ວຍວິທີການຄັດເລືອກແບບເຈາະຈົງ (Srisa-at, 2015)

**2.3 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ**

ເຄື່ອງມືທີ່ໃຊ້ເຂົ້າໃນການເກັບກຳ ແລະ ລວບລວມຂໍ້ມູນໃນຄັ້ງນີ້ເປັນແບບສອບຖາມຊະນິດມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບ ໂດຍປັບປຸງຈາກແບບສອບຖາມຂອງ (Srisa-at, 2015) ແລະ Vathanavong et al (2021) ເຊິ່ງມີຄວາມໝາຍດັ່ງນີ້:

ຄະແນນ 5 ໝາຍເຖິງການມີສ່ວນຮ່ວມຢູ່ໃນລະດັບຫຼາຍທີ່ສຸດ

ຄະແນນ 4 ໝາຍເຖິງການມີສ່ວນຮ່ວມຢູ່ໃນລະດັບຫຼາຍ

ຄະແນນ 3 ໝາຍເຖິງການມີສ່ວນຮ່ວມຢູ່ໃນລະດັບປານກາງ

ຄະແນນ 2 ໝາຍເຖິງການມີສ່ວນຮ່ວມຢູ່ໃນລະດັບໜ້ອຍ

ຄະແນນ 1 ໝາຍເຖິງການມີສ່ວນຮ່ວມຢູ່ໃນລະດັບໜ້ອຍທີ່ສຸດ.

ແບບສອບຖາມປະກອບມີ 3 ພາກ ຄື: ພາກທີ 1 ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ພາກທີ 2 ແມ່ນຂໍ້ມູນທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຂອງຊຸມຊົນໃນ 3 ດ້ານ ໄດ້ແກ່: ດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ, ດ້ານການກັ່ນຕອງນັກຮຽນ ແລະ ດ້ານການສົ່ງເສີມນັກຮຽນ. ພາກທີ 3 ຂໍ້ສະເໜີແນະເພີ່ມເຕີມ. ແບບສອບຖາມດັ່ງກ່າວນີ້ໄດ້ຜ່ານການກວດສອບ ແລະ ປະເມີນຄຸນນະພາບຈາກຜູ້ຊ່ຽວຊານຈຳນວນ 3 ທ່ານ ເຊິ່ງໄດ້ຄ່າດັດສະນີຄວາມສອດຄ່ອງ (IOC) ຢູ່ລະຫວ່າງ 0.67-1.00. ຫຼັງຈາກນັ້ນນຳໄປທົດລອງກັບກຸ່ມຕົວຢ່າງທີ່ມີບໍ່ແມ່ນກຸ່ມທີ່ໃຊ້ຈິງ ແຕ່ມີຄຸນລັກສະນະທີ່ຄ້າຍຄືກຸ່ມຕົວຢ່າງຈຳນວນ 30 ຄົນ ເພື່ອຫາຄ່າຄວາມເຊື່ອໝັ້ນ (reliability) ທັງສະບັບດ້ວຍຄ່າສະປະສິດອານຟາຂອງຄອນບາດ (Cronbach's alpha) ເທົ່າກັບ 0.850 ແລະ ໄດ້ມີການປັບປຸງບາງສ່ວນຕາມຄຳແນະນຳຂອງຜູ້ຊ່ຽວຊານ ເພື່ອໃຫ້ໄດ້ແບບສອບຖາມສະບັບສົມບູນ ແລ້ວນຳໄປເກັບກຳກັບກຸ່ມຕົວຢ່າງຈຳນວນ 106 ສະບັບ.

**2.4 ວິທີວິເຄາະຂໍ້ມູນ**

ການວິເຄາະຂໍ້ມູນຄັ້ງນີ້ແມ່ນໄດ້ນຳໃຊ້ສະຖິຕິພື້ນຖານໃນການວິເຄາະຂໍ້ມູນ ໄດ້ແກ່: ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ການວິເຄາະຄວາມແປປ່ວນ Analysis of Variance ຫຼື One Way ANOVA ໃນການທົດສອບ ແລະ ປຽບທຽບດ້ານຕ່າງໆ ໂດຍໃຊ້ໂປຣແກຣມສຳເລັດຮູບ (SPSS V.26) ເຂົ້າໃນການຊ່ວຍຄຳນວນ ແລະ ວິເຄາະຂໍ້ມູນດັ່ງກ່າວ.

**3. ຜົນໄດ້ຮັບ**

3.1 ລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາທີ່ເມືອງປາກອູ ແຂວງຫຼວງພະບາງ ພົບວ່າໂດຍລວມຢູ່ໃນລະດັບຫຼາຍ ($\overline{X}$ = 3.65, S.D = 1.04). ເມື່ອພິຈາລະນາເປັນລາຍດ້ານພົບວ່າດ້ານທີ່ຫຼາຍກວ່າໝູ່ແມ່ນດ້ານການມີສ່ວນຮ່ວມໃນການສົ່ງເສີມນັກຮຽນ ($\overline{X}$ = 3.75, S.D = 1.01). ຮອງລົງມາແມ່ນດ້ານການມີສ່ວນຮ່ວມໃນການຮູ້ຈັກນັກຮຽນເປັນສ່ວນບຸກຄົນ ($\overline{X}$ = 3.73, S.D = 1.02) ແລະ ດ້ານການມີສ່ວນຮ່ວມໃນການກັ່ນຕອງນັກຮຽນ ($\overline{X}$ = 3.49, S.D = 1.16) ຕາມລຳດັບ (ດັ່ງລາຍລະອຽດສະແດງໃນຕາຕະລາງທີ 1)

3.2 ຜົນການປຽບທຽບລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາ ຊັ້ນປະຖົມສຶກສາ ທີ່ເມືອງປາກອູ ແຂວງຫຼວງພະບາງ ໂດຍຈຳແນກຕາມເພດ, ອາຍຸ, ລະດັບການສຶກສາ ແລະ ຕຳແໜ່ງງານ. ພົບວ່າ:

1) ເພດ ທີ່ແຕກຕ່າງກັນ ຈະມີຜົນຕໍ່ກັບ ການມີສ່ວນຮ່ວມທີ່ແຕກຕ່າງກັນ. ໃນດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ, ດ້ານການກັ່ນຕອງນັກຮຽນ ແລະ ດ້ານການສົ່ງເສີມນັກຮຽນ ໂດຍໃຊ້ສະຖິຕິໃນການວິເຄາະ Independent-Samples T-test ເຂົ້າໃນການທົດສອບເຫັນວ່າ ແຕກຕ່າງກັນ ເພາະຄ່າທົດສອບທາງສະຖິຕິເທົ່າກັບ 0.01, 0.001 ແລະ 0.00 ຕາມລຳດັບ ເຊິ່ງມີຄ່ານ້ອຍກວ່າ 0.05. (ດັ່ງລາຍລະອຽດສະແດງໃນຕາຕະລາງທີ 2 )

2) ອາຍຸ ທີ່ແຕກຕ່າງກັນ ຈະມີຜົນຕໍ່ກັບ ການມີສ່ວນຮ່ວມ ທີ່ແຕກຕ່າງກັນ ໃນດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ, ດ້ານການກັ່ນຕອງນັກຮຽນ ແລະ ດ້ານການສົ່ງເສີມນັກຮຽນ ໂດຍໃຊ້ສະຖິຕິໃນການວິເຄາະ One-way ANOVA ເຂົ້າໃນການທົດສອບເຫັນວ່າ ແຕກຕ່າງກັນ ເພາະມີຄ່າທົດສອບທາງສະຖິຕິເທົ່າກັບ 0.00, 0.00 ແລະ 0.00 ຕາມລໍາດັບ ເຊິ່ງມີຄ່າ Sig ນ້ອຍກວ່າ 0.05. (ດັ່ງລາຍລະອຽດສະແດງໃນຕາຕະລາງທີ 3)

3) ລະດັບການສຶກສາ ທີ່ແຕກຕ່າງກັນ ຈະມີຜົນຕໍ່ກັບ ການມີສ່ວນຮ່ວມ ບໍ່ແຕກຕ່າງກັນ ໃນດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ, ດ້ານການກັ່ນຕອງນັກຮຽນ ໂດຍໃຊ້ສະຖິຕິໃນການວິເຄາະ One-way ANOVA ເຂົ້າໃນການທົດສອບເຫັນວ່າ ຄ່າທົດສອບທາງສະຖິຕິເທົ່າກັບ 0.23, 0.26 ເຊິ່ງໃຫຍ່ກວ່າ 0.05 ສະແດງໃຫ້ເຫັນວ່າບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ ແລະ ແຕກຕ່າງກັນ ໃນດ້ານການສົ່ງເສີມນັກຮຽນ ເພາະມີຄ່າທົດສອບທາງສະຖິຕິເທົ່າກັບ 0.00 ເຊິ່ງມີຄ່ານ້ອຍກວ່າ 0.05 (ດັ່ງລາຍລະອຽດສະແດງໃນຕາຕະລາງທີ 4 )

4) ປະສົບການ ທີ່ແຕກຕ່າງກັນ ຈະມີຜົນຕໍ່ກັບ ການມີສ່ວນຮ່ວມ ບໍ່ແຕກຕ່າງກັນ ໃນດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ, ດ້ານການກັ່ນຕອງນັກຮຽນ ໂດຍໃຊ້ສະຖິຕິໃນການວິເຄາະ One-way ANOVA ເຂົ້າໃນການທົດສອບເຫັນວ່າ ຄ່າທົດສອບທາງສະຖິຕິເທົ່າກັບ 0.56, 0.34 ເຊິ່ງໃຫຍ່ກວ່າ 0.05 ສະແດງໃຫ້ເຫັນວ່າບໍ່ສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ ແລະ ແຕກຕ່າງກັນ ໃນດ້ານການສົ່ງເສີມນັກຮຽນ ເພາະມີຄ່າທົດສອບທາງສະຖິຕິເທົ່າກັບ 0.00 ເຊິ່ງນ້ອຍກວ່າ 0.05 (ດັ່ງລາຍລະອຽດສະແດງໃນຕາຕະລາງທີ 5)

5) ຕໍາແໜ່ງງານ ທີ່ແຕກຕ່າງກັນຈະມີຜົນຕໍ່ກັບ ການມີສ່ວນຮ່ວມ ບໍ່ແຕກຕ່າງກັນ ໂດຍໃຊ້ສະຖິຕິໃນການວິເຄາະ One-way ANOVA ເຂົ້າໃນການທົດສອບເຫັນວ່າ ໃນດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ, ດ້ານການກັ່ນຕອງນັກຮຽນ ແລະ ດ້ານການສົ່ງເສີມນັກຮຽນ ເພາະມີຄ່າທົດສອບທາງສະຖິຕິເທົ່າກັບ 0.25, 0.29 ແລະ 0.15 ຕາມລໍາດັບ ເຊິ່ງມີຄ່າໃຫຍ່ກວ່າ 0.05 (ດັ່ງລາຍລະອຽດສະແດງໃນຕາຕະລາງທີ 6 )

**4. ວິພາກຜົນ**

4.1 ລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນນະພາບການສຶກສາ ຊັ້ນປະຖົມສຶກສາທີ່ເມືອງປາກອູ ແຂວງຫຼວງພະບາງ ໂດຍລວມຢູ່ໃນລະດັບຫຼາຍ ເນື່ອງຈາກວ່າ ສ່ວນຕົວຂອງບຸກຄົນມີຄວາມເຂົ້າໃນໃນໜ້າທີ່ຂອງພົນລະເມືອງລາວທີ່ມີສ່ວນຮ່ວມໃນການພັດທະນາການສຶກສາຫຼາຍຂຶ້ນ ຈາກຂໍ້ມູນລວງເລິກຊີ້ໃຫ້ເຫັນເຖິງວ່າກຸ່ມຕົວຢ່າງມີຄວາມສາມາດການຄວບຄຸມຕົນເອງ, ການຍອມຮັບໃນເຫດ ແລະ ຜົນ, ມີຄວາມເມດຕາ, ມີຄວາມຄິດລິເລີ່ມສ້າງສັນ ແລະ ມີຈິນຕະນາການ; ຄ່າໃຊ້ຈ່າຍໃນການມາໂຮງຮຽນ, ການພົວພັນລະຫວ່າງສະມາຊິກໃນຄອບຄົວ, ການສື່ສານລະຫວ່າງນັກຮຽນກັບສະມາຊິກໃນຄອບຄົວ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ຂອງນັກຮຽນໃນຄອບຄົວ, ມີທັກສະການສື່ສານ, ຮູ້ຈັກພາລະບົດບາດ ແລະ ຄວາມຮັບຜິດຊອບພິເສດໃນໂຮງຮຽນ, ການມີສ່ວນຮ່ວມໃນກິດຈະກໍາຕ່າງໆທັງໃນໂຮງຮຽນ ແລະ ນອກໂຮງຮຽນ. ໂດຍລວມແລ້ວຊຸມຊົນມີສ່ວນຮ່ວມຢ່າງຕັ້ງໜ້າໃນການພັດທະນາວຽກງານການສຶກສາ ທັງດ້ານການສົ່ງເສີມນັກຮຽນ, ດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ ແລະດ້ານການກັ່ນຕອງນັກຮຽນ ເຊິ່ງຜົນການຄົ້ນຄວ້ານີ້ສອດຄ່ອງກັບ ສອດຄ່ອງກັບບົດລາຍງານກາງສະໄໝໃນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ 5 ປີ ຄັ້ງທີ່ VIII (2016-2020) ຂອງກະຊວງສຶກສາທິການ ແລະ ກິລາ (ກະຊວງສຶກສາທິການ ແລະ ກິລາ, 2020) ທີ່ໄດ້ລະບຸເຖິງຜົນໄດ້ຮັບວ່າໃນລະດັບການສຶກສາຂັ້ນປະຖົມສຶກສາຫຼາຍພາກສ່ວນໃນສັງຄົມໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານການພັດທະນາການສຶກສາມີແນວໂນ້ມເພີ່ມຂຶ້ນ ເນື່ອງຈາກໄດ້ມີການສົມທົບກັບຊຸມຊົນ ແລະຄະນະພັດທະນາການສຶກສາຂັ້ນບ້ານ ເພື່ອຊຸກຍູ້ ແລະ ລະດົມໃຫ້ ເດັກໃນເກນອາຍຸ ໄດ້ເຂົ້າເຖິງການສຶກສາຊັ້ນປະຖົມຢ່າງທົ່ວເຖິງ ຈຶ່ງເຮັດໃຫ້ໃນປີ 2020 ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນ ປະຖົມ ເພີ່ມຂຶ້ນ ຈາກ 98.2% ເປັນ 98.5% ສ່ວນອັດຕາເຂົ້າຮຽນສຸດທິ ແມ່ນຍັງຄົງທີ່ປະມານ 99%. ຮູບພາບທີ 6 ລຸ່ມນີ້ ສະແດງໃຫ້ເຫັນ ການສົມທຽບອັດຕາເຂົ້າຮຽນສຸດທິໃນຊັ້ນປະຖົມ ລະຫວ່າງ ສົກຮຽນ 2018-19 ແລະ 2019-2020. ເຫັນໄດ້ວ່າ ໃນທົ່ວປະເທດ ມີ 8 ແຂວງທີ່ມີອັດຕາດັ່ງກ່າວຫຼຸດລົງ, ມີ 1 ແຂວງເທົ່າເດີມ ແລະ 9 ແຂວງທີ່ເພີ່ມ ຂຶ້ນ ແລະ ແຂວງທີ່ຫຼຸດລົງຫຼາຍກວ່າໝູ່ແມ່ນແຂວງຄໍາມ່ວນ (ຫຼຸດລົງ ເກືອບ 4%). ສ່ວນທາງດ້ານຄວາມສະເໝີພາບຍິງ- ຊາຍ ຖືວ່າໃນຊັ້ນປະຖົມສຶກສາມີຄວາມສະເໝີພາບສູງ ສະແດງອອກຜ່ານດັດຊະນີຄວາມສະເໝີພາບຍິງ-ຊາຍເທົ່າ 1.00. ຄຽງຄູ່ກັບການສຶກສາພາກລັດ, ການສຶກສາພາກເອກະຊົນກໍ່ໄດ້ປະກອບສ່ວນຫຼາຍສົມຄວນເຂົ້າໃນການ ພັດທະນາການສຶກສາຊັ້ນປະຖົມ. ໃນສົກຮຽນ 2019-2020 ນັກຮຽນຊັ້ນປະຖົມພາກເອກະຊົນກວມ 7.4% ຂອງຈໍານວນນັກຮຽນທັງໝົດ, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 0.5% (Ministry of Education and Sports, 2018; ຫ້ອງການສຶກສາທິການ ແລະ ກິລາເມືອງປາກອູ, 2023). ນອກຈາກນີ້ຍັງສອດຄ່ອງກັບທິດສະດີການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາການສຶກສາຂອງ Colletta and Perkins (1995) ທີ່ລະບຸວ່າ ການມີສ່ວນຮ່ວມຂອງຊຸມຊົນໃນການສຶກສາ ແມ່ນການສຶກສາເກີດຂຶ້ນບໍ່ພຽງແຕ່ຢູ່ໃນໂຮງຮຽນເທົ່ານັ້ນ, ແຕ່ຍັງຢູ່ໃນຄອບຄົວ, ຊຸມຊົນ, ແລະສັງຄົມ. ເຖິງວ່າຈະມີໜ້າທີ່ຮັບຜິດຊອບທີ່ແຕກຕ່າງກັນຂອງແຕ່ລະກຸ່ມກໍຕາມ, ແຕ່ບໍ່ມີໃຜເປັນຕົວແທນພຽງຜູ້ດຽວທີ່ຈະຮັບຜິດຊອບ 100 % ໃນການສຶກສາເດັກນ້ອຍ. ພໍ່ແມ່ແລະຄອບຄົວບໍ່ສາ ມາດເປັນກຸ່ມຄົນດຽວສໍາລັບການສຶກສາຂອງເດັກນ້ອຍຕາບໃດທີ່ລູກຂອງພວກເຂົາພົວພັນກັບແລະອອກຈາກໂລກນອກຄອບຄົວຂອງພວກເຂົາ. ຊຸມຊົນ ແລະ ສັງຄົມຕ້ອງໜູນຊ່ວຍພໍ່ແມ່ ແລະ ຄອບຄົວໃນການລ້ຽງດູ, ສັງຄົມ, ແລະ ການ

ສຶກສາຂອງລູກຫຼານ. ໂຮງຮຽນແມ່ນສະຖາບັນທີ່ສາມາດກະກຽມເດັກນ້ອຍເພື່ອປະກອບສ່ວນເຂົ້າໃນການປັບປຸງຂອງສັງຄົມທີ່ເຂົາເຈົ້າດໍາເນີນການ, ດ້ວຍການປະກອບໃຫ້ເຂົາເຈົ້າມີທັກສະທີ່ສໍາຄັນໃນສັງຄົມ. ໂຮງຮຽນບໍ່ສາມາດ ແລະບໍ່ຄວນດໍາເນີນງານເປັນຫົວໜ່ວຍແຍກພາຍໃນສັງຄົມ.ເນື່ອງຈາກແຕ່ລະກຸ່ມມີບົດບາດແຕກຕ່າງກັນໃນການປະກອບສ່ວນເຂົ້າໃນການສຶກສາຂອງເດັກນ້ອຍ, ຕ້ອງມີຄວາມພະຍາຍາມໃນການສ້າງຂົວຕໍ່ລະຫວ່າງເຂົາເຈົ້າເພື່ອເຮັດໃຫ້ການປະກອບສ່ວນສູງສຸດ. ການສຶກສາດໍາເນີນໄປຢ່າງມີປະສິດທິພາບ ແລະປະສິດທິຜົນທີ່ສຸດ ເມື່ອກຸ່ມຄົນຕ່າງໆເຫຼົ່ານີ້ຮ່ວມມືກັນ. ຕາມນັ້ນແລ້ວ, ມັນເປັນສິ່ງສໍາຄັນທີ່ຈະສ້າງຕັ້ງ ແລະ ສືບຕໍ່ພະຍາ ຍາມພັດທະນາການພົວພັນຄູ່ຮ່ວມມືລະຫວ່າງໂຮງຮຽນ, ພໍ່ແມ່ ແລະ ຊຸມຊົນ. ການສຶກສາຄົ້ນຄ້ວາຈໍານວນຫຼາຍໄດ້ກໍານົດວິທີການຕ່າງໆຂອງການມີສ່ວນຮ່ວມຂອງຊຸມຊົນໃນການສຶກສາ, ສະຫນອງຊ່ອງທາງສະເພາະໂດຍຜ່ານທີ່ຊຸມຊົນສາມາດມີສ່ວນຮ່ວມໃນການສຶກສາຂອງເດັກນ້ອຍ. ສະແດງໃຫ້ເຫັນຮູບແບບຕ່າງໆຂອງການມີສ່ວນຮ່ວມຂອງຊຸມຊົນ: (a) ການຄົ້ນຄວ້າແລະການເກັບກໍາຂໍ້ມູນ; (b) ປຶກສາຫາລືກັບຜູ້ວາງນະໂຍບາຍ; (c) ການຄຸ້ມຄອງໂຮງຮຽນ; (d) ການອອກແບບຫຼັກສູດ; (e) ການພັດທະນາອຸປະກອນການຮຽນຮູ້; ແລະ (f) ການກໍ່ສ້າງໂຮງຮຽນ ແລະຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Roning (2017) ທີ່ສຶກສາກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນໃນການກໍາຈັດຂີ້ເຫຍື້ອມູນຝອຍຂອງເທດສະບານຕາກໃບ, ຈັງຫວັດນະລາທິວາດ ໂດຍຜົນການຄົ້ນຄວ້າຊີ້ໃຫ້ເຫັນເຖິງການມີສ່ວນຮ່ວມຂອງຊຸມຊົນໃນການກໍາຈັດຂີ້ເຫຍື້ອມູນຝອຍໃນເຂດເທດບານໂດຍພາພຣວມຢູ່ໃນລະດັບຫຼາຍ ໂດຍລຽງລໍາດັບຄ່າສະເລ່ຍຈາກຫຼາຍໄປຫານ້ອຍໄດ້ດັ່ງນີ້ ຄື ການມີສ່ວນຮ່ວມໃນການຮັບຜົນປະໂຫຍດ, ການມີສ່ວນຮ່ວມໃນການດໍາເນີນງານ, ການມີສ່ວນຮ່ວມໃນການ ຕິດຕາມປະເມີນຜົນ ແລະການມີສ່ວນຮ່ວມໃນການຄິດ ແລະ ສະເໜີແນວທາງການຈັດການຂີ້ເຫຍື້ອຕາມລໍາດັບ.

4.2 ການປຽບທຽບລະດັບການມີສ່ວນຮ່ວມແມ່ນແບ່ງອອກເປັນສອງບັນຫາ ຄື: ກຸ່ມທີ່ແຕກຕ່າງກັນແຕ່ມີລະດັບການມີສ່ວນຮ່ວມທີ່ແຕກຕ່າງກັນ ໂດຍສະເພາະທາງດ້ານເພດ ແລະ ອາຍຸທີ່ແຕກຕ່າງກັນມີລະດັບການມີສ່ວນຮ່ວມທີ່ແຕກຕ່າງກັນ ແລະ ກຸ່ມທີ່ແຕກຕ່າງກັນແຕ່ມີລະດັບການມີສ່ວນຮ່ວມທີ່ບໍ່ແຕກຕ່າງກັນ ເຊິ່ງທັງສອງບັນຫາສອດຄ່ອງ ແລະ ຄັດແຍ່ງກັບຜົນການຄົ້ນຄວ້າຂອງ Roning (2017) ທີ່ພົບວ່າ ປະຊາຊົນທີ່ມີ ເພດ, ອາຍຸ, ລະດັບການສຶກສາ, ລາຍໄດ້ ແລະ ສະຖານພາບໃນຄອບຄົວທີ່ແຕກຕ່າງກັນມີສ່ວນຮ່ວມໃນການຈັດການຂີ້ເຫຍື້ອມູນຝອຍໂດຍພາບລວມ ແລະ ລາຍດ້ານບໍ່ແຕກຕ່າງກັນ ສ່ວນປະຊາຊົນທີ່ມີອາຊີບຕ່າງກັນມີສ່ວນຮ່ວມໃນການຈັດການຂີ້ເຫຍື້ອມູນຝອຍ ແຕກຕ່າງກັນຢ່າງມີໄລຍະສໍາຄັນທາງສະຖິຕິ ແລະ ສອດຄ່ອງກັບງານຄົ້ນຄວ້າຂອງ Wimolrattanachaisiri (2019) ທີ່ໄດ້ສຶກສາກ່ຽວກັບ ການມີສ່ວນຮ່ວມໃນກິດຈະກໍາການປ້ອງກັນ ແລະ ຄວບຄຸມໂລກໄຂ້ເລືອດອອກ: ກໍລະນີສຶກສາໃນເຂດອໍາເພີເດີມບາງນາງບວດ, ຈັງຫວັດສຸພັນບູລີ ເຊິ່ງຜົນການຄົ້ນຄວ້າພົບວ່າ ເມື່ອປຽບທຽບລະດັບການມີສ່ວນຮ່ວມຂອງປະຊາຊົນໃນ ວຽກງານປ້ອງກັນ ແລະ ຄວບຄຸມພະຍາດໄຂ້ເລືອດອອກ ພົບວ່າ: ອາຍຸ, ອາຊີບ ແລະ ປະຫວັດການເຈັບເປັນໄຂ້ເລືອດອອກ, ສະຖານະພາບທາງສັງຄົມ, ສະມາຊິກສະໂມສອນອາສາສະໝັກສາທາລະນະສຸກບ້ານ ໄດ້ຮັບການສະໜັບສະໜູນດ້ານເສດຖະກິດສັງຄົມ ແລະ ບໍລິເວນເທດສະບານເມືອງມີສ່ວນຮ່ວມກິດຈະກໍາປ້ອງກັນ ແລະ ຄວບຄຸມພະຍາດໄຂ້ເລືອດອອກ ແມ່ນແຕກຕ່າງກັນ ດ້ວຍລະດັບສະຕິ 0.05. ສໍາລັບຍຸດທະສາດໃນການປ້ອງກັນ ແລະ ຄວບຄຸມພະຍາດໄຂ້ເລືອດອອກ ໄດ້ແກ່: ການວາງແຜນງົບປະມານ, ການຈັດຊື້ປັດໃຈໃນການກໍາຈັດຕົວໜອນແກ່ ແລະກໍາຈັດຕົວອ່ອນຂອງຍຸງ, ການປ້ອງກັນ, ສະກັດກັ້ນ ແລະ ທໍາລາຍແຫຼ່ງເພາະພັນຂອງຍຸງລາຍ, ການພັດທະນາບຸກຄະລາກອນ ແລະ ແລກປ່ຽນຄວາມຮູ້. ການໂຄສະນາເຜີຍແຜ່ຄວາມຮູ້ໃນ ການປ້ອງກັນ ແລະ ຄວບຄຸມພະຍາດໄຂ້ເລືອດອອກ, ການຮັກສາສະພາບແວດລ້ອມຂອງຊຸມຊົນ ແລະບ້ານ, ການສ້າງເຄືອຂ່າຍປ້ອງກັນ ແລະ ຄວບຄຸມພະຍາດໄຂ້ເລືອດອອກ ແລະ ການບໍລິການສຸຂະພາບ.

**5. ສະຫຼຸບ**

ລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນນະພາບການສຶກສາ ຊັ້ນປະຖົມສຶກສາທີ່ເມືອງປາກອູ ແຂວງຫຼວງພະບາງ ໂດຍລວມຢູ່ໃນລະດັບຫຼາຍ. ລະດັບການມີສ່ວນຮ່ວມໃນການພັດທະນາການສຶກສາມີຄວາມແຕກຕ່າງກັນເມື່ອຈໍາແນກຕາມເພດ ແລະ ອາຍຸ.  ແລະ ບໍ່ແຕກຕ່າງກັນເມື່ອຈໍາແນກຕາມລະດັບການສຶກສາ, ປະສົບການ ແລະ ຕໍາແໜ່ງງານ.

ນອກຈາກນີ້ ຜູ້ຄົ້ນຄົ້ນມີຂໍ້ສະເໜີແນະນໍາເພີ່ມເຕີມ ຕໍ່ພາກສ່ວນທີ່ກ່ຽວຂ້ອງເຊັ່ນ ດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ, ຜູ້ມີສ່ວນກ່ຽວຂ້ອງທັງຜູ້ປົກຄອງ ແລະ ຄູ ຄວນເອົາໃຈໃສ່ໃນການມີສ່ວນຮ່ວມໃນການສົ່ງເສີມຄວາມສາມາດໃນການສື່ສານ, ການປັບຕົວເຂົ້າກັບກຸ່ມ, ຄວາມຮັບຜິດຊອບຕໍ່ຕົນເອງ, ຜູ້ອື່ນ, ແລະ ສັງຄົມ, ຄວາມມີລະບຽບວິໄນ ແລະ ຄວາມສາມາດໃນການໄຈ້ແຍກ ຜິດ, ຖືກ, ຊົ່ວ, ດີ ຂອງນັກຮຽນຕື່ມອີກ.  ດ້ານການກັ່ນຕອງນັກຮຽນ, ຄວນເພີ່ມທະວີໃນການສ່ວນຮ່ວມໃນການສຶກສາຂໍ້ມູນຈາກການໄປຢ້ຽມຢາມບ້ານຂອງນັກຮຽນໃນຊຸມຊົນກ່ຽວກັບກຸ່ມພິເສດ, ກຸ່ມປົກກະຕິ, ກຸ່ມທີ່ມີຄວາມສ່ຽງ ແລະ ກຸ່ມບັນຫາ ເພື່ອຕິດຕາມນັກຮຽນຂອງແຕ່ລະກຸ່ມໄດ້ງ່າຍຂຶ້ນ. ດ້ານການສົ່ງເສີມນັກຮຽນ, ຄວນເພີ່ມທະວີໃນການມີສ່ວນຮ່ວມໃນການພານັກຮຽນທີ່ມີບັນຫາທີ່ໄດ້ຮັບການຊ່ວຍເຫຼືອແລ້ວແຕ່ບໍ່ດີຂຶ້ນ ແລະ ຍາກທີ່ຈະຊ່ວຍເຫຼືອ. ຄວນເປີດໂອກາດໃຫ້ຊຸມຊົນມີສ່ວນຮ່ວມຢ່າງຕັ້ງໜ້າໃນການກໍານົດແຜນນະໂຍບາຍ ແລະ ຍຸດທະສາດການພັດທະນາການສຶກສາ, ການພັດທະນາຫຼັກສູດການສຶກສາ, ການ

ບໍລິຫານຈັດການຫຼັກສູດ ແລະ ມີແນວທາງທີ່ຊັດເຈນໃນປະສານງານຮ່ວມມືກັບຊຸມຊົນ.

## 6. ຂໍ້ຂັດແຍ້ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2020). *ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ປະຈໍາສົກສຶກສາ 2019-2020 ແລະ ແຜນພັດທະນາການສຶກສາແລະກິລາປະຈໍາສົກສຶກສາ 2020-2021.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2021). *ຄູ່ມືຝຶກອົບຮົມການຄຸ້ມຄອງທີ່ເນັ້ນໂຮງຮຽນເປັນຫຼັກ ສໍາລັບຜູ້ບໍລິຫານໂຮງຮຽນການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ.* ນະຄອນຫຼວງວຽງຈັນ: ກົມການສຶກສາກ່ອນໄວຮຽນ.

ກົມຈັດຕັ້ງ ແລະ ພະນັກງານ. (2020). *ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025).* ນະຄອນຫຼວງວຽງຈັນ: ກົມຈັດຕັ້ງ ແລະ ພະນັກງານ, ກະຊວງສຶກສາທິການ ແລະ ກິລາ.

ວັດທະນາວົງ, ທ. (2015). *ລະບຽບວິທີວິໄຈທາງການສຶກສາ.* ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ເມືອງປາກອູ. (2021). *ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຕ່ປີ (2015-2019).* ເມືອງປາກອູ: ຫ້ອງວ່າການປົກຄອງເມືອງ.

ລັດຖະບານແຫ່ງ ສປປ ລາວ. (2016). *ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025.* ດໍາລັດວ່າດ້ວຍຍຸດທະສາດການພັດທະນາຊັບພະຍາກອນມະນຸດ, ສະບັບເລກທີ 95/ລບ, ນະຄອນຫຼວງວຽງຈັນ, ວັນທີ 26.4.2016.

ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກອູ. (2021). *ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020) ແລະ ແຜນພັດທະນາການສຶກສາ ແລະ ກິລາ 5 ປີ ຄັ້ງທີ IX (2021-2025).* ເມືອງປາກອູ: ຫ້ອງການສຶກສາທິການ ແລະ ກິລາ ເມືອງ.

ຫ້ອງການສຶກສາທິການ ແລະ ກິລາ ເມືອງປາກອູ. (2023). ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາປະຈໍາສົກຮຽນ 2022-2023 ແລະ ແຜນພັດທະນາການສຶກສາ ແລະ ກິລາ ປະຈໍາສົກຮຽນ 2023-2024. ເມືອງປາກອູ: ຫ້ອງການສຶກສາທິການ ແລະ ກິລາ ເມືອງ.

Boonmanee, R,. (2020). Parents' Participations in Educational Development of Students at Schools in Kabinburi District under the Office of Prajeenburi Education Service Area 2. *The Journal of Nakhonrachasima College, 12*(1): 610-619.

Colletta, Nat J & Perkins,Gillian M. (1995). *Participation in the education and training sector (English).* Social Development Notes,no. 1. Washington, DC: World Bank.

Ministry of Education and Sports. (2018). *Education and Sports Sector Performance 2016-2020: Mid-Tearm Report*. Vientaine: Ministry of Education and Sports.

Roning, R,. (2017). *PUBLIC PARTICIPATION IN SOLID WASTE MANAGEMENT IN TAKBAI MUNICIPALITY, AMPHOE TAKBAI, CHANGWAT NARATHIWAT.* Thesis of master's degree in public administration in local government, college of Local Administration Khon Kaen University.

Srisa-at, B. (2015). *Research Methodology (9th Edition).* Bangkok: Suviriyasan Co., Ltd.

Uppanisakorn, W., & Seelah, P. (2017). The Guidelines for Participatory Development of Education Administration of Mahamakut Buddhist University, Yasothon Religious Study College. *Journal of Humanities and Social Sciences, Ubon Ratchathani Rajabhat University,*9182 - 189.

Vathanavong et al. (2021). Challenges in Developing Curriculum Training for Enhancing the Competencies in the 21st Century Skills-Based Learning in the New Normal Situations. *Souphanouvong University Journal of Multidisciplinary Research and Development, 7*(2): 29 - 42.

Wimolrattanachaisiri, P. (2019). *The Participation of People in Activity to Prevention and Control the Dengue Hemorrhagic Fever Disease: A Case Study of Deombangnangbuat District, Suphanburi Province.* Master Thesis of Public Administration). Graduate School, Chandrakasem Rajabhat.

**ຕາຕາລາງທີ 1**: ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາທີ່ເມືອງປາກອູ ແຂວງຫຼວງພະບາງ

| **ເນື້ອໃນ** | $\overline{X}$ | **S.D** | **ລະດັບການມີສ່ວນຮ່ວມ** |
|---|---|---|---|
| **1. ດ້ານການມີສ່ວນຮ່ວມໃນການຮູ້ຈັກນັກຮຽນເປັນສ່ວນບຸກຄົນ** | | | |
| 1.1 ສ່ວນຮ່ວມໃນການສັງເກດພຶດຕິກຳຂອງນັກຮຽນ ເຊັ່ນ: ການໄປ-ມາໂຮງຮຽນ, ບໍ່ຕັ້ງໃຈຮຽນ, ຂາດຮຽນ, ໄປຫຼິ້ນກັບໝູ່, ການໃຊ້ເງິນຈ່າຍເງິນຂອງນັກຮຽນ ແລະ ຜົນການຮຽນສະເລ່ຍໃນແຕ່ລະພາກຮຽນ; | 3.70 | 1.15 | ຫຼາຍ |
| 1.2 ສ່ວນຮ່ວມໃນການສອບຖາມນັກຮຽນກ່ຽວກັບຄວາມສາມາດຂອງເຂົາເຈົ້າໃນດ້ານຕ່າງໆ ເຊັ່ນ: ທັກສະການສື່ສານ, ພາລະບົດບາດ ແລະ ຄວາມຮັບຜິດຊອບພິເສດໃນໂຮງຮຽນ, ການມີສ່ວນຮ່ວມໃນກິດຈະກຳຕ່າງໆທັງໃນໂຮງຮຽນ ແລະ ນອກໂຮງຮຽນ; | 3.64 | 1.04 | ຫຼາຍ |
| 1.3 ສ່ວນຮ່ວມໃນການສອບຖາມນັກຮຽນກ່ຽວກັບດ້ານຮ່າງກາຍ ເຊັ່ນ: ຄວາມສູງ, ນໍ້າໜັກ, ພະຍາດປະຈຳຕົວ, ການປ່ຽນແປງທາງດ້ານຮ່າງກາຍ ເຊັ່ນ: ການໄດ້ຍິນ, ເບິ່ງເຫັນ, ເພດ; | 3.53 | 1.12 | ຫຼາຍ |
| 1.4 ສ່ວນຮ່ວມໃນການສອບຖາມນັກຮຽນກ່ຽວກັບເລື່ອງຄອບຄົວ ເຊັ່ນ: ຄ່າໃຊ້ຈ່າຍໃນການມາໂຮງຮຽນ, ການພົວພັນລະຫວ່າງສະມາຊິກໃນຄອບຄົວ, ການສື່ສານລະຫວ່າງນັກຮຽນກັບສະມາຊິກໃນຄອບຄົວ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ຂອງນັກຮຽນໃນຄອບຄົວ; | 3.78 | 1.08 | ຫຼາຍ |
| 1.5 ສ່ວນຮ່ວມໃນການສອບຖາມນັກຮຽນກ່ຽວກັບດ້ານສັງຄົມເຊັ່ນ: ຄວາມສາມາດໃນການຈັດການບັນຫາກັບຜູ້ອື່ນ, ຄວາມສາມາດໃນການສື່ສານ, ການປັບຕົວເຂົ້າກັບກຸ່ມ, ຄວາມຮັບຜິດຊອບຕໍ່ຕົນເອງ, ຜູ້ອື່ນ, ແລະ ສັງຄົມ, ຄວາມມີລະບຽບວິໄນ ແລະ ຄວາມສາມາດໃນການໄຈ້ແຍກຜິດ, ຖືກ, ຊົ່ວ, ດີ; | 3.82 | 0.94 | ຫຼາຍ |
| 1.6 ສ່ວນຮ່ວມໃນການສຳພາດນັກຮຽນກ່ຽວກັບດ້ານຈິດໃຈ ເຊັ່ນ: ອາລົມຊຶມເສົ້າ, ຄວາມກັງວົນ, ການຄວບຄຸມຕົນເອງ, ການຍອມຮັບໃນເຫດ ແລະ ຜົນ, ຄວາມເມດຕາ, ຄວາມຄິດລິເລີ່ມສ້າງສັນ ແລະ ຈິນຕະນາການ; | 3.88 | 0.86 | ຫຼາຍ |
| 1.7 ສ່ວນຮ່ວມໃນການສຳພາດນັກຮຽນກ່ຽວກັບພຶດຕິກຳຂອງເຂົາເຈົ້າ ເຊັ່ນ: ພຶດຕິກຳເສີຍຊາ, ຄວາມກ້າວລ້າວ, ການເກັບຕົວ, ການໂດນອອກຈາກໂຮງຮຽນ, ການໃຊ້ຈ່າຍຟຸມເຟືອຍ, ການໃຊ້ຢາເສບຕິດ ແລະ ພຶດຕິກຳທາງເພດທີ່ບໍ່ເໝາະສົມ; | 3.82 | 0.95 | ຫຼາຍ |
| **ຄ່າສະເລ່ຍລາຍດ້ານ** | **3.73** | **1.02** | ຫຼາຍ |
| **2. ດ້ານການມີສ່ວນຮ່ວມໃນການກັ່ນຕອງນັກຮຽນ** | | | |
| 2.1 ສ່ວນຮ່ວມໃນການສັງເກດເຫັນພຶດຕິກຳ ແລະ ໃຫ້ຂໍ້ມູນກ່ຽວກັບພຶດຕິກຳຂອງນັກຮຽນ ໃນຂົງເຂດຕໍ່ໄປນີ້: ການຄົບເພື່ອນ, ການຢູ່ຮ່ວມກັນກັບຜູ້ອື່ນ, ການຊ່ວຍເຫຼືອຄົນອື່ນ, ມັກອ່ານໜັງສື; | 3.45 | 1.13 | ຫຼາຍ |
| 2.2 ສ່ວນຮ່ວມໃນການສຶກສາຂໍ້ມູນຈາກການໄປຢ້ຽມຢາມບ້ານຂອງນັກຮຽນໃນຊຸມຊົນກ່ຽວກັບກຸ່ມພິເສດ, ກຸ່ມປົກກະຕິ, ກຸ່ມທີ່ມີຄວາມສ່ຽງ ແລະ ກຸ່ມບັນຫາ ເພື່ອຕິດຕາມນັກຮຽນຂອງແຕ່ລະກຸ່ມໄດ້ງ່າຍຂຶ້ນ; | 3.65 | 1.03 | ຫຼາຍ |
| 2.3 ສ່ວນຮ່ວມໃນການກວດສອບ ຫຼື ຖາມຄົນໃກ້ຊິດ/ພີ່ນ້ອງຂອງນັກຮຽນໃນຊຸມຊົນກ່ຽວກັບກຸ່ມພິເສດ ກຸ່ມປົກກະຕິ, ກຸ່ມຄວາມສ່ຽງ, ກຸ່ມບັນຫາ; | 3.37 | 1.19 | ຫຼາຍ |
| **ຄ່າສະເລ່ຍລາຍດ້ານ** | **3.49** | **1.16** | ປານກາງ |
| **3. ດ້ານການມີສ່ວນຮ່ວມໃນການສົ່ງເສີມນັກຮຽນ** | | | |
| 3.1 ສ່ວນຮ່ວມໃນການເຮັດວຽກກັບຊຸມຊົນເພື່ອສົ່ງເສີມນັກຮຽນຂອງກຸ່ມພິເສດ, ກຸ່ມປົກກະຕິ, ກຸ່ມຄວາມສ່ຽງ, ແລະ ກຸ່ມມີບັນຫາ ໂດຍວິທີການຕໍ່ໄປນີ້: ຈັດຕັ້ງສູນການຮຽນຮູ້, ຈັດຝຶກອົບຮົມ/ | 3.68 | 0.92 | ຫຼາຍ |

| ເນື້ອໃນ | $\overline{X}$ | S.D | ລະດັບການມີສ່ວນຮ່ວມ |
|---|---|---|---|
| ຈັດຫາວິທະຍາກອນ, ສົ່ງນັກຮຽນເຂົ້າຮ່ວມການຝຶກອົບຮົມພາກລັດ ແລະ ເອກະຊົນ, ຈັດສັນພື້ນທີ່ກິລາ ແລະ ສະຖານທີ່ພັກຜ່ອນ; | | | |
| 3.2 ສ່ວນຮ່ວມໃນການຊຸກຍູ້ສົ່ງເສີມໃຫ້ນັກຮຽນຈັດກິດຈະກຳຢູ່ສູນການຮຽນຮູ້ເຊັ່ນ: ຫ້ອງສະຫມຸດເຄື່ອນທີ່ເພື່ອພັດທະນານັກຮຽນໃຫ້ມີຄຸນສົມບັດທີ່ຢາກໄດ້ເຊັ່ນ: ເປັນຄົນດີ, ມີປັນຍາ (ເປັນຄົນສະຫຼາດ) ແລະ ມີຄວາມສຸກ; | 3.73 | 1.20 | ຫຼາຍ |
| 3.3 ສ່ວນຮ່ວມໃນການໃຫ້ຄຳແນະນຳກັບນັກຮຽນໃນກຸ່ມພິເສດ, ກຸ່ມປົກກະຕິ, ກຸ່ມທີ່ມີຄວາມສ່ຽງ, ກຸ່ມມີບັນຫາ ໂດຍການເຊີນຜູ້ທີ່ມີປະສົບການ, ມີຄວາມຮູ້,ຊ່ຽວຊານ, ຊີ່ງຄຸນວຸດທິ ແລະ ວິທະຍາກອນຜູ້ມີຄວາມຮູ້ຕາມສະພາບບັນຫາມາໃຫ້ຄວາມຮູ້ ແລະ ຄຳແນະນຳໃນການປ້ອງກັນ, ແກ້ໄຂບັນຫາ; | 3.79 | 1.10 | ຫຼາຍ |
| 3.4 ສ່ວນຮ່ວມໃນການສ້າງຊ່ອງທາງ ຫຼື ເຄືອຂ່າຍການຮຽນຮູ້ ໂດຍມີການປະສານງານລະຫວ່າງຊຸມຊົນ, ພໍ່ແມ່ນັກຮຽນ ແລະ ໂຮງຮຽນໃນການພັດທະນານັກຮຽນໃນກຸ່ມພິເສດ, ກຸ່ມປົກກະຕິ, ກຸ່ມສ່ຽງ; | 3.79 | 1.14 | ຫຼາຍ |
| 3.5 ສ່ວນຮ່ວມໃນການປະສານງານການຊ່ວຍເຫຼືອນັກຮຽນເປັນລາຍບຸກຄົນ ໃນກຸ່ມພິເສດ, ກຸ່ມປົກກະຕິ, ກຸ່ມທີ່ມີຄວາມສ່ຽງສູງ, ກຸ່ມທີ່ມີບັນຫາ ໂດຍການພົບກັບພໍ່ແມ່ຂອງນັກຮຽນ ຫຼື ຄົນໃກ້ຊິດ; | 3.68 | 1.02 | ຫຼາຍ |
| 3.6 ສ່ວນຮ່ວມໃນການໃຫ້ການຮ່ວມມືໂດຍການຕິດຕາມພຶດຕິກຳຂອງນັກຮຽນໃນຊຸມຊົນ; | 3.58 | 1.09 | ຫຼາຍ |
| 3.7 ສ່ວນຮ່ວມໃນການສົ່ງນັກຮຽນທີ່ມີບັນຫາສຸຂະພາບຈິດທີ່ໄດ້ຮັບການຊ່ວຍເຫຼືອ ແຕ່ບໍ່ດີຂຶ້ນໄປປິ່ນປົວຢູ່ໂຮງໝໍ; | 3.84 | 1.03 | ຫຼາຍ |
| 3.8 ສ່ວນຮ່ວມໃນການຕິດຕາມ ແລະ ຊ່ວຍເຫຼືອນັກຮຽນທີ່ມີບັນຫາການຮຽນ ແລະ ບັນຫາອື່ນໆ; | 3.84 | 0.87 | ຫຼາຍ |
| 3.9 ສ່ວນຮ່ວມໃນການພານັກຮຽນທີ່ມີບັນຫາທີ່ໄດ້ຮັບການຊ່ວຍເຫຼືອແລ້ວແຕ່ບໍ່ດີຂຶ້ນ ແລະ ຍາກທີ່ຈະຊ່ວຍເຫຼືອ ດັ່ງນັ້ນຈຶ່ງສົ່ງໄປຫາຜູ້ຊ່ຽວຊານສະເພາະດ້ານ. | 3.89 | 0.78 | ຫຼາຍ |
| **ຄ່າສະເລ່ຍລາຍດ້ານ** | **3.75** | **1.01** | ຫຼາຍ |
| **ຄ່າສະເລ່ຍລວມ** | **3.65** | **1.04** | **ຫຼາຍ** |

**ຕາຕາລາງທີ 2**: ສະແດງເຖິງຜົນການປຽບທຽບດ້ານເພດຕໍ່ກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາ

| ເນື້ອໃນ | ເພດ | $\overline{X}$ | S.D | T | Sig. | ແປຄວາມໝາຍ |
|---|---|---|---|---|---|---|
| 1. ການຮູ້ຈັກນັກຮຽນເປັນສ່ວນບຸກຄົນ | ຊາຍ | 3.62 | 1.04 | 1.63 | 0.01 | ແຕກຕ່າງກັນ |
| | ຍິງ | 3.37 | 0.88 | | | |
| 2. ການກັ່ນຕອງນັກຮຽນ | ຊາຍ | 3.77 | 0.97 | 1.84 | 0.001 | ແຕກຕ່າງກັນ |
| | ຍິງ | 3.51 | 0.81 | | | |
| 3. ການສົ່ງເສີມນັກຮຽນ | ຊາຍ | 3.48 | 0.91 | -4.65 | 0.00 | ແຕກຕ່າງກັນ |
| | ຍິງ | 4.07 | 0.52 | | | |

*ກຳນົດລະດັບຄວາມສຳຄັນທາງສະຖິຕິ* $\alpha=0.05$, $H_0$:Sig>α *ບໍ່ແຕກຕ່າງກັນ* / $H_1$:Sig≤α *ແຕກຕ່າງກັນ*

**ຕາຕາລາງທີ 3**: ສະແດງເຖິງຜົນການປຽບທຽບດ້ານອາຍຸ ຕໍ່ກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາ

| ເນື້ອໃນ | ຄວາມແປປວນ | Sum of Squares | Mean Square | F | Sig. | ແປຄວາມໝາຍ |
|---|---|---|---|---|---|---|
| | ລະຫວ່າງກຸ່ມ | 38.03 | 26.01 | 44.92 | 0.00 | ແຕກຕ່າງກັນ |

| | | | | | | |
|---|---|---|---|---|---|---|
| ການຮູ້ຈັກນັກຮຽນເປັນສ່ວນບຸກຄົນ | ພາຍໃນກຸ່ມ | 67.86 | 0.57 | | | |
| | ລວມ | 105.89 | | | | |
| ການກັ່ນຕອງນັກຮຽນ | ລະຫວ່າງກຸ່ມ | 24.40 | 18.13 | 20.46 | 0.00 | ແຕກຕ່າງກັນ |
| | ພາຍໃນກຸ່ມ | 98.13 | 0.886 | | | |
| | ລວມ | 122.54 | | | | |
| ການສົ່ງເສີມນັກຮຽນ | ລະຫວ່າງກຸ່ມ | 20.23 | 13.41 | 22.47 | 0.00 | ແຕກຕ່າງກັນ |
| | ພາຍໃນກຸ່ມ | 64.21 | 0.59 | | | |
| | ລວມ | 84.45 | | | | |

*ກຳນົດລະດັບຄວາມສຳຄັນທາງສະຖິຕິ* α=0.05, $H_0$:Sig>α *ບໍ່ແຕກຕ່າງກັນ* / $H_1$:Sig≤α *ແຕກຕ່າງກັນ*

**ຕາຕາລາງທີ 4**: ສະແດງເຖິງຜົນການປຽບທຽບດ້ານລະດັບການສຶກສາ ຕໍ່ກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາ

| ເນື້ອໃນ | ຄວາມແປປວນ | Sum of Squares | Mean Square | F | Sig. | ແປຄວາມໝາຍ |
|---|---|---|---|---|---|---|
| ການຮູ້ຈັກນັກຮຽນເປັນສ່ວນບຸກຄົນ | ລະຫວ່າງກຸ່ມ | 3.09 | 1.54 | 1.47 | 0.23 | ບໍ່ແຕກຕ່າງກັນ |
| | ພາຍໃນກຸ່ມ | 100.58 | 1.05 | | | |
| | ລວມ | 103.68 | | | | |
| ການກັ່ນຕອງນັກຮຽນ | ລະຫວ່າງກຸ່ມ | 2.44 | 1.22 | 1.34 | 0.26 | ບໍ່ແຕກຕ່າງກັນ |
| | ພາຍໃນກຸ່ມ | 96.17 | 0.90 | | | |
| | ລວມ | 98.61 | | | | |
| ການສົ່ງເສີມນັກຮຽນ | ລະຫວ່າງກຸ່ມ | 19.97 | 19.98 | 29.26 | 0.00 | ແຕກຕ່າງກັນ |
| | ພາຍໃນກຸ່ມ | 75.91 | 0.68 | | | |
| | ລວມ | 95.88 | | | | |

*ກຳນົດລະດັບຄວາມສຳຄັນທາງສະຖິຕິ* α=0.05, $H_0$:Sig>α *ບໍ່ແຕກຕ່າງກັນ* / $H_1$:Sig≤α *ແຕກຕ່າງກັນ*

**ຕາຕາລາງທີ 5**: ສະແດງເຖິງຜົນການປຽບທຽບດ້ານປະສົບການ ຕໍ່ກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາ

| ເນື້ອໃນ | ຄວາມແປປວນ | Sum of Squares | Mean Square | F | Sig. | ແປຄວາມໝາຍ |
|---|---|---|---|---|---|---|
| ການຮູ້ຈັກນັກຮຽນເປັນສ່ວນບຸກຄົນ | ລະຫວ່າງກຸ່ມ | 1.22 | 0.61 | 0.58 | 0.56 | ບໍ່ແຕກຕ່າງກັນ |
| | ພາຍໃນກຸ່ມ | 80.45 | 1.05 | | | |
| | ລວມ | 81.68 | | | | |
| ການກັ່ນຕອງນັກຮຽນ | ລະຫວ່າງກຸ່ມ | 1.95 | 0 .97 | 1.07 | 0.34 | ບໍ່ແຕກຕ່າງກັນ |
| | ພາຍໃນກຸ່ມ | 67.66 | 0.91 | | | |
| | ລວມ | 69.61 | | | | |
| ການສົ່ງເສີມນັກຮຽນ | ລະຫວ່າງກຸ່ມ | 17.36 | 13.68 | 19.04 | 0.00 | ແຕກຕ່າງກັນ |
| | ພາຍໃນກຸ່ມ | 68.53 | 0.71 | | | |
| | ລວມ | 85.89 | | | | |

*ກຳນົດລະດັບຄວາມສຳຄັນທາງສະຖິຕິ* α=0.05, $H_0$:Sig>α *ບໍ່ແຕກຕ່າງກັນ* / $H_1$:Sig≤α *ແຕກຕ່າງກັນ*

**ຕາຕາລາງທີ 6**: ສະແດງເຖິງຜົນການປຽບທຽບດ້ານຕຳແໜ່ງງານ ຕໍ່ກັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນະພາບການສຶກສາຊັ້ນປະຖົມສຶກສາ

| ເນື້ອໃນ | ຄວາມແປປວນ | Sum of Squares | Mean Square | F | Sig. | ແປຄວາມໝາຍ |
|---|---|---|---|---|---|---|
| ການຮູ້ຈັກນັກຮຽນເປັນສ່ວນບຸກຄົນ | ລະຫວ່າງກຸ່ມ | 2.89 | 1.44 | 1.37 | 0.25 | ບໍ່ແຕກຕ່າງກັນ |
| | ພາຍໃນກຸ່ມ | 78.79 | 1.05 | | | |
| | ລວມ | 81.68 | | | | |
| ການກັ່ນຕອງນັກຮຽນ | ລະຫວ່າງກຸ່ມ | 2.26 | 1.13 | 1.24 | 0.29 | ບໍ່ແຕກຕ່າງກັນ |
| | ພາຍໃນກຸ່ມ | 57.35 | 0.90 | | | |
| | ລວມ | 59.61 | | | | |
| ການສົ່ງເສີມນັກຮຽນ | ລະຫວ່າງກຸ່ມ | 2.94 | 1.47 | 1.87 | 0.15 | ບໍ່ແຕກຕ່າງກັນ |
| | ພາຍໃນກຸ່ມ | 82.94 | 0.78 | | | |
| | ລວມ | 85.89 | | | | |

*ກຳນົດລະດັບຄວາມສຳຄັນທາງສະຖິຕິ* $\alpha=0.05$, $H_0$:Sig>$\alpha$ *ບໍ່ແຕກຕ່າງກັນ* / $H_1$:Sig$\leq\alpha$ *ແຕກຕ່າງກັນ*